ໂຄງການການສຶກສາເພື່ອຊ່ວຍຕົນເອງ

ຄວາມຮູ້ທ້ອງຖິ່ນ

# ຢາທໍ່ໜໍ່ຄຳ

(ສະບັບທົດລອງໃຊ້)



ຂໍ້ມູນຈາກບ້ານດອນ, ເມືອງເຟືອງ

ແຂວງວຽງຈັນ

ໂດຍ: ອຈ ບົວພັນ ປະສວຍຄຳ

2007

# ຄວາມຮູ້ທ້ອງຖິ່ນ

# "ຜາທໍ່ໜໍ່ຄຳ"


ຂໍ້ມູນຈາກ: ບ້ານດອນ ເມືອງເຟືອງ,
ແຂວງວຽງຈັນ

ຂຽນໂດຍ: **ອ.ຈ ບົວພັນ ປ່ະລອຍຄຳ**

ຮຽບຮຽງໂດຍ: **ອ.ຈ ບຸນທົງ**
**ອ.ຈ ຂວັນແກ້ວ**
**ອ.ຈ ໄພໄຊ**

ພິມແລະຈັດໜ້າໂດຍ: **ນ. ສຸກັນຍາ ສີວິໄຊ**

ແຕ້ມໂດຍ: **ທ. ໄຕ່ ແກ້ວວົງສາ**



ເຈົ້າຂອງ: ຫ້ອງການສຶກສາເມືອງເຟືອງ, ແຂວງ
ວຽງຈັນແລະສູນອົບຮົມຮ່ວມພັດທະນາ

ອຸປະຖຳໂດຍ:

New Zealand Agency for International Development ( NZAID )

## ຄຳນຳ

ປຶ້ມເຫລັ້ມນີ້ເປັນຜົນງານການຂຽນ ແລະ ໃຫ້ຂໍ້ມູນຂອງຄູອາຈານແລະຊາວບ້ານດອນ ເມືອງເຟືອງ ແຂວງວຽງຈັນ ຊຶ່ງເປັນການຮັບໂຮມປະສົບການໃນການດຳລົງຊີວິດແບບເພິ່ງຕົນເອງ, ກຸ້ມຕົນເອງໂດຍອາໄສທຳມະຊາດ, ສິ່ງແວດລ້ອມອ້ອມຕົວແບບດັ້ງເດີມຕັ້ງແຕ່ດົນນານຈົນເຖິງປະຈຸບັນນີ້.

ປຶ້ມເຫລັ້ມນີ້ເປັນບ່ອນອີງໃຫ້ແກ່ຄູໃນການສຶກສາແນວຄວາມຄິດຮັກທຳມະຊາດ, ຮັກພູມປັນຍາກໍຄືວິຖີຊີວິດທ້ອງຖິ່ນໃຫ້ແກ່ເດັກເພື່ອສ້າງແນວຄິດຮັກທ້ອງຖິ່ນຂອງຕົນ.

ຄະນະຈັດທຳຄິດວ່າປຶ້ມເຫລັ້ມນີ້ຊຶ່ງເປັນສະບັບທົດລອງໃຊ້ ແລະ ຄົງເປັນປະໂຫຍດບໍ່ຫລາຍກໍໜ້ອຍໃຫ້ແກ່ຄູອາຈານໃນການສິດສອນເດັກພ້ອມກັນນັ້ນຄິດວ່າຍັງມີຫລາຍສິ່ງຫລາຍຢ່າງທີ່ຍັງຂາດຕົກບົກພ່ອງທີ່ພ້ອມຈະປັບປຸງປ່ຽນແປງຕາມຄວາມເໝາະສົມ.

ຄະນະຈັດທຳ

**ຜາທໍ່ໜໍ່ຄຳ**

1. <u>ຕົ້ນກຳເນີດຂອງຜາທໍ່ໜໍ່ຄຳ</u>:

ຜາທໍ່ເປັນຜາທີ່ໃຫຍ່; ມີຄວາມສູງປະມານ 900 ແມັດ, ເປັນຜາ 3 ໜ່ວຍຕິດຕໍ່ກັບແລະມີໜໍ່ຄຳເກີດຂຶ້ນຢູ່ໜ້າຜາໜ່ວຍກາງເຄິ່ງ 2 ໜໍ່ເທິງຜາທໍ່ແມ່ນມີຕົ້ນໄມ້ງອກງາມຕາມຕີນຜາ ແລະ ໜ້າຜາ ມີສັດຫລາຍຊະນິດທີ່ອາໄສຢູ່ເຮັດໃຫ້ຜູ້ຄົນທີ່ໄດ້ເບິ່ງແລ້ວເປັນໜ້າອອນຊອນນຳທຳມະຊາດທີ່ສວຍງາມນີ້

ຜາທໍ່ໜໍ່ຄຳນີ້ເປັນຜາທີ່ມີຄວາມສັກສິດເຊິ່ງຊາວບ້ານເມືອງເຟືອງທັງຫລາຍພາກັນເຊື່ອຖືກັນມາໄດ້ຫລາຍຮ້ອຍປີແລ້ວເຊິ່ງແຕ່ລະປີພໍຮອດມື້ 13 ຄ່ຳເດືອນ 6 ຊາວບ້ານຈະຕ້ອງໄດ້ຈັດມີການລ້ຽງເຈົ້າຜາທໍ່ທຸກໆປີ, ປີທຳອິດລ້ຽງຄວາຍ, ຮອດ 2 ປີໃດກໍ່ມີການລ້ຽງໝູ, ປີທີ່ 3 ແມ່ນລ້ຽງຄວາຍອີກເຊິ່ງເພິ່ນເອີ້ນວ່າ 2 ປີ ຮາມ 3 ປີ ຮ່ວມ.



## ເລື່ອງ: ຜາຫໍ່ໜໍ່ຄຳ

ແຕ່ກີ້ແຕ່ກ່ອນມີປະຊາຊົນຈຳນວນໜຶ່ງມີ 3 ໝື່ນຄົນມາອາໄສຢູ່ຕາມແຄມນ້ຳລຶກ ແລະ ນ້ຳຕົງ.

ແຕ່ລະຄົນກໍມີຄວາມມຸ່ງຫວັງວ່າຈະຂຶ້ນເອົາໜໍ່ຄຳທີ່ຢູ່ຜາຫໍ່, ມີມື້ໜຶ່ງເຂົາເຈົ້າໄດ້ເຕົ້າໂຮມກັນວາງແຜນຈະຂຶ້ນໄປເອົາໜໍ່ຄຳ, ເຂົາເຈົ້າຈຶ່ງພາກັນຕັດໄມ້ໄຜ່ເຮັດຂັ້ນໄດໄຕ່ຂຶ້ນໄປ, ເມື່ອເວລາຂຶ້ນໄປໃກ້ຈະຮອດໜໍ່ຄຳປະກົດວ່າໄມ້ຕອກທີ່ມັດຂັ້ນໄດຢູ່ນັ້ນໄດ້ກາຍເປັນງູອ້າປາກຈະຕອດ, ຜູ້ທີ່ຂຶ້ນກ່ອນກໍ່ຮ້ອງຂຶ້ນວ່າ: ງູ! ງູ, ຜູ້ທີ່ຂຶ້ນຕາມຫລັງກໍວ່າຄືກັນສຸດທ້າຍກໍພາກັນຕົກຂັ້ນໄດຕາຍຈົນໝົດ: ແຕ່ປານນັ້ນກໍຍັງບໍ່ຍອມຈຶ່ງພາກັນຕັ້ງຕູບໂດຍເອົາເຟືອງມາເຮັດເປັນຕູບຈຳນວນ 3 ໝື່ນຕູບເຟືອງ, ແຕ່ລະມື້ຄົນທີ່ຂຶ້ນໄປຜາຫໍ່ເພື່ອຈະເອົາໜໍ່ຄຳແມ່ນຕົກຕາຍໝົດ ແລະ ຜູ້ທີ່ບໍ່ຕາຍກໍເອົາປູນທີ່ຄ້ຽວໝາກນັ້ນມາໂຮມກັນເຮັດທາດໃສ່ກະດູກຄົນຕາຍຈົນກາຍເປັນລັງທາດ ແລະໄດ້ຕັ້ງຊື່ບ້ານວ່າ ສາມໝື່ນຕູບເຟືອງ, ສຳລັບບ້ານນາແຍງທຸກໆມື້ຊາວບ້ານພາກັນໄປແຍງໜໍ່ຄຳຈົນເຖິງທຸກວັນນີ້

ວິຊາ: ພາສາລາວ

ບົດທີ1:

ຫົວບົດ: ຜົນປະໂຫຍດຂອງຫີນຜາທໍ່ທໍ່ຄຳ

ຢູ່ບ້ານຂອງຂ້ອຍມີຜາທໍ່ທໍ່ຄຳເຊິ່ງຊາວບ້ານພາກັນໄປເອົາຫີນຜາທີ່ຢູ່ຕີນຜາມາເຜົາເຮັດປູນຂາວ.

ນອກຈາກເຜົາເຮັດປູນຂາວແລ້ວຊາວບ້ານຍັງເອົາຫີນມາທັບ ເປັນກ້ອນນ້ອຍໆເພື່ອມາປະສົມກັບການກໍ່ສ້າງເຮືອນຂອງຊາວບ້ານອີກ.



## ວິຊາ: ຄະນິດສາດ

### ບົດທີ1 : ການບວກເລກ

1. ຈົ່ງນັບໃຫ້ຄົບ100

ມີແມ່ຕູ້ຜູ້ໜຶ່ງໄດ້ນັ່ງສັງເກດເບິ່ງຄົນທີ່ຂຶ້ນຂັ້ນໄດເພື່ອຈະໄປເອົາໝໍ່ຄຳຢູ່ຜາໜໍ່, ຈຳນວນຄົນທີ່ຂຶ້ນເທື່ອໜຶ່ງມີ 50 ຄົນ, ເມື່ອຂຶ້ນບໍ່ໄດ້ເພິ່ນລົງມານັ່ງເຊົາເມື່ອຍ ກ່ອນ; ຄິດໄດ້ຄິດດີພັດຈູໃໝ່ຂຶ້ນອີກ 50 ຄົນ

ຖາມວ່າຄົນທີ່ຂຶ້ນໄປເອົາໝໍ່ຄຳຢູ່ເທິງຜາທີ່ມີຈັກຄົນ

ຮູ້ວ່າເທື່ອທີ່1 ຈຳນວນ 50 ຄົນ

ແລະເທື່ອທີ່2 ຈຳນວນ 50 ຄົນ



ວິຊາ: ໂລກອ້ອມຕົວ

ບົດທີ1

ຫົວບົດ: ສັດທີ່ອາໄສຢູ່ຕາມຜາທໍ່ໜໍ່ຄໍາ

1. ສັດທີ່ມີຢູ່ຜາທໍ່ໜໍ່ຄໍາ

ຜາທໍ່ແຕ່ກ່ອນເພິ່ນວ່າກັນວ່າມີສັດຢູ່ຫລາຍຊະນິດອາໄສເຊັ່ນ: ຊ້າງ, ເຍືອງ, ເໝັ້ນ, ຫອນ, ກະຮອກ, ກະແຕ, ຈ້ອນ, ນົກແອ່ນ, ບ່າງລົ້ວ,ເຜິ້ງຄໍາ, ເຈຍດໍາ ແລະ ນົກຊະນິດຕ່າງໆ

ກະຈ້ອນ



ຊ້າງ



( ສໍາລັບຊ້າງປະຈຸບັນບໍ່ພົບເຫັນໃນເຂດນີ້ແລ້ວ )

ມາຮອດປະຈຸບັນຍັງຄົງຫລົງເຫລືອພຽງສັດບາງຊະນິດເທົ່ານັ້ນທີ່ອາໄສຢູ່ແຕ່ຫລາຍກວ່າໝູ່ແມ່ນລິງແດງ, ລິງກັງ, ລີງລົມແລະທະນີ, ສ່ວນເຜີ້ງນັ້ນຍັງຄົງເຫລືອຢູ່ແຕ່ຈຳນວນໜ້ອຍເທົ່ານັ້ນ( ໃນຖ້ຳເຜີ້ງທີ່ຢູ່ເທິງຜາຫໍ່ )



ເຜີ້ງທີ່ອາໄສຢູ່ຕາມຜາຫໍ່
ເຊິ່ງປະຈຸບັນຍັງເຫລືອຢູ່ຫລາຍສິບຄອນ

2. ໄມ້ທີ່ມີ: ແມ່ນມີໄມ້ແຕ້ຄ່າ, ໄມ້ທີກ, ໄມ້ຟຸງ, ໄມ້ງີ້ວ ດຳ, ໄມ້ເຕ່ນ, ໄມ້ຈັນດຳ( ເປັນຢາ )......

## ເພງ: ຜາທີ່ຫໍ່ຄຳ

♪ ຂ້ອຍຈະເລົ່າ ປະຫວັດເປັນມາ
ຜາທີ່ຫໍ່ຄຳ ນັ້ນມີຈິງແທ້
ແຕ່ພໍ່ແມ່ ປູ່ຍ່າຕາຍາຍ
ໄດ້ກະຈາຍ ສູ່ລູກຫລານຟັງ
♪ ຫໍ່ຄຳຢູ່ກັບ ຜາທີ່
ຢູ່ມໍ່ໆ ຄືຈະເອົາໄດ້
ແຕ່ວ່າເຫັນ ນັ້ນເປັນຂວັນຕາ
ຈະຈັບເອົາມາ ບໍ່ໄດ້ດອກທ່ານເອີຍ( ຊ້ຳ )



## ເຊີ້ງ: ຜາທໍ່

ໂຮ......................ຮົວ ( 3 )

| | |
|---|---|
| ເອີຍສາວເອີຍສາວ | ສາວລາວຍຸກໃໝ່ |
| ງາມທັງນ້ຳໃຈ | ງາມທັງໃບໜ້າ |
| ເຈົ້າຮັບອາສາ | ເຮັດວຽກຊ່ວຍບ້ານ |
| ບໍ່ໄດ້ມົວຄ້ານ | ເຮັດວຽກທ້າວທັນ |
| ພ້ອມຮ່ວມໃຈກັນ | ຊອກຮຽນຮ່ຳຮູ້ |
| ຖ້າຍັງບໍ່ຮູ້ | ຜາທໍ່ໜໍ່ຄຳ |
| ນ້ອງຈົ່ງຈົດຈຳ | ເລື່ອງເລົ່າເອົາໄວ້ |
| ແຕ່ກ່ອນເພິ່ນໄດ້ | ເລົ່າຂານກັນມາ |
| ວ່າຢູ່ເທິງຜາ | ມີໜໍ່ຄຳຢູ່ |
| ຫລາຍຄົນເພິ່ນຮູ້ | ຈຶ່ງຢາກໄດ້ຄອງ |
| ຕົກລົງປອງດອງ | ເຮັດຂັ້ນໄດໄວ້ |
| ຈາກນັ້ນອາໄສ | ໄຕ່ຜາຂຶ້ນເບິ່ງ |
| ຜູ້ຢູ່ທາງເທິງ | ກັບຮ້ອງໃຮຕື່ນ |
| ເຮັດໃຫ້ຜູ້ອື່ນ | ຕົກຜາໄປນຳ |
| ຄືຈັ່ງເວນກຳ | ຕົກຕາຍໝົດໝູ່ |
| ຫລາຍຄົນມາຢູ່ | ປຸກເຮັດຫຼູບເຟືອງ |
| ເຮັດໃຫ້ເປັນເມືອງ | ທີ່ຫລາຍຄົນເວົ້າ |
| ກໍ່ເກີດເປັນເຄົ້າ | ສາມພື້ນເມືອງເຟືອງ |

ບີ້ລະຄືເລື່ອງ ສືບເນື່ອງກັນມາ
ນ້ອງນາງບາດຫລ້າ ຈົ່ງຈຳໃຫ້ດີ
ຕ້ອງສາມັກຄີ ຮັກສາເອົາໄວ້
ລູກຫລານຈຶ່ງໄດ້ ຮູ້ເລື່ອງເປັນມາ
ບ່ອນຄົບເຂົາຊ່າ ຜາທໍ່ທໍ່ຄາວ ( 2 )
ໂຮ...............................ຮິ້ວ ( 3 )



ຮູບຜາທໍ່ຍາມເຊົ້າທີ່ເມືອງເຟືອງ

## ເກມ: ແຂ່ງຂັນກັນເກັບຫີນ

ຈຸດປະສົງ: ເຮັດໃຫ້ເດັກມີການເຮັດວຽກເປັນທີມ

ອຸປະກອນ: - ກ້ອນຫີນ

- ຊີງ ຫລື ໄມ້ເພື່ອມາເຮັດຊີງຊັ່ງ

ຈຳນວນຄົນແລະເວລາ

- ເວລາ 10 ນາທີ, ບໍ່ຈຳກັດຈຳນວນຄົນ

ບາດກ້າວດຳເນີນ:

1. ແບ່ງນັກຮຽນອອກເປັນ 4 ກຸ່ມ, ເຮັດເປັນ 4 ແຖວ
2. ຫລັງຈາກນັ້ນຄູເອົາກ້ອນຫີນມາກອງໄວ້ຕໍ່ໜ້ານັກຮຽນ 1 ກອງ
3. ເມື່ອໄດ້ຍິນສັນຍານຄູບອກ, ນັກຮຽນຜູ້ທີ່ຢູ່ຕໍ່ໜ້າໃຫ້ແລ່ນເຂົ້າມາເກັບກ້ອນຫີນຢູ່ກອງໄປ 1 ກ້ອນ, ຖ້າໄດ້ແລ້ວໃຫ້ແລ່ນກັບໄປຕ້ອຍມືໝູ່ທີ່ຢູ່ຕໍ່ມາໂດຍຜູ້ທີ່ເກັບຫີນແລ້ວນັ້ນຕ້ອງແລ່ນໄປຢູ່ທາງຫລັງຂອງໝູ່
4. ເມື່ອເກັບກ້ອນຫີນໝົດກອງແລ້ວໃຫ້ຄູຊັ່ງກ້ອນຫີນທີ່ແຕ່ລະກຸ່ມມີຢູ່, ກຸ່ມໃດໜັກກວ່າແມ່ນກຸ່ມນັ້ນຊະນະ

## ບົດເລກ

ມື້ໜຶ່ງລຸງຄຳໄດ້ໄປທ່ຽວຕີນຜາທີ່, ລາວໄດ້ເຫັນ ຕົ້ນໄມ້ຫລາຍຢ່າງຄື



**ຜົນປະໂຫຍດຂອງການປົກປັກຮັກສາ**
**ຜາທົ່ທົ່ຄຳ**

- ເປັນມໍລະດົກໃຫ້ລູກຫລານໄດ້ເຫັນ
- ເປັນແຫລ່ງທ່ອງທ່ຽວ
- ເປັນບ່ອນເຕົ້າໂຮມນ້ຳໃຈຄວາມສາມັກຄີ
- ມີທຳມະຊາດທີ່ເອື້ອອຳນວຍໃນການລ້ຽງສາ ຂອງປະຊາຊົນເຂດນີ້

